ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********✧********

**ຫ້ອງວ່າການລັດຖະບານ**

**ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ**

**ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ**

ເລກທີ 340 /ຄຊກລ.ສຄ

ນະຄອນຫລວງວຽງຈັນ, ວັນທີ: 27 JUL 2016

# ບົດບັນທຶກ ກອງປະຊຸມກຸ່ມວິຊາການ
# ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 02, 2016

ກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 02, 2016 ໄດ້ໄຂຂຶ້ນ ໃນວັນທີ 30 ເດືອນ ມິຖຸນາ ປີ 2016, ເວລາ 09:00 ຢູ່ທີ່ຫ້ອງປະຊຸມຂອງຫ້ອງການ ຄຊກລ ໂດຍການເປັນປະທານຂອງ ທ່ານ  ບຸນພະມິດ ໂສມວິຈິດ ຮອງຫົວໜ້າຫ້ອງການ, ຜູ້ຊີ້ນຳວຽກງານປະຕິບັດງານ ຫ້ອງການ ຄຊກລ ໂດຍມີຕົວແທນຈາກອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ລວມທັງພະນັກງານ ແລະ ວິຊາການ ຫ້ອງການ ຄຊກລ ເຂົ້າຮ່ວມຈຳນວນ: 12 ທ່ານ, ຍິງ: 02, ທ່ານ.

ໃນການກ່າວໄຂກອງປະຊຸມ,  ທ່ານປະທານກອງປະຊຸມໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມກຸ່ມວິຊາການ ແມ່ນກອງປະຊຸມ ເພື່ອແລກປ່ຽນສົນທະນາ, ປຶກສາຫາລືກ່ຽວກັບ ແນວທາງໃນການໂຄສະນາຜົນຮ້າຍຂອງ ລບຕ ໃຫ້ປະຊາຊົນເຂົ້າໃຈ ແລະ ສາມາດຫຼີກລ່ຽງ ການເກີດອຸປະຕິເຫດຈາກ ລບຕ, ລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ແມ່ນມີຈຳນວນບໍ່ໜ້ອຍ ແລະ ບໍ່ແນ່ໃຈວ່າຈະໃຊ້ເວລາເທົ່າໃດໃນການເກັບກູ້ ສະນັ້ນ ພວກເຮົາຄວນເນັ້ນໃສ່ວຽກງານການໂຄສະນາ ເພື່ອບໍ່ໃຫ້ເກີດມີອຸປະຕິເຫດຈາກ ລບຕ.

ໃນກອງປະຊຸມ ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫ້ອງການ ຄຊກລ ໄດ້ທົບທວນບົດບັນທຶກກອງປະຊຸມຄັ້ງທີ່ຜ່ານມາໂດຍຫຍໍ້ ພ້ອມກັບລາຍງານການເຄື່ອນໄຫວວຽກປະຈຳໄຕມາດ 02 ປີ 2016 ແລະ ແຜນຄາດຄະເນ ໃນໄຕມາດ 3 ປີ 2016 ເຊິ່ງໃນນີ້ແມ່ນຈະຊຸມໃສ່: ຊຸກຍູ້ກະຊວງ ຖວທ ຈັດລາຍການວິທະຍຸ ເພື່ອໂຄສະນາຜົນຮ້າຍຂອງ ລບຕ ໃນ 4 ແຂວງ (ແຂວງຄຳມ່ວນ, ສາລາວັນ, ເຊກອງ ແລະ ຈຳປາສັກ), ຈັດກອງປະຊຸມກຸ່ມວິຊານ, ທົບທວນຄືນກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຂອງ ອສບຢູ່ 2 ແຂວງ.

ຈາກນັ້ນຕາງໜ້າຈາກບັນດາອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ກໍ່ໄດ້ຜັດປ່ຽນກັນລາຍງານຜົນສຳເລັດໃນການປະຕິບັດວຽກງານຂອງຕົນໃນໄລຍະ 03 ເດືອນທີ່ຜ່ານມາ ແລະ ແຜນການເຄື່ອນໄຫວໃນໄຕມາດ 03, ປີ 2016 ໃນນີ້ ໄດ້ມີ ທ່ານຜູ້ຊ່ວຍຜູ້ປະສານງານວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳກົມພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ, ກົມອະນຸບານ ກະຊວງສຶກສາທິການ ແລະ ກິລາ, ອົງການນ້ຳ ໃຈນັກກິລາ ປະຈຳ ສປປ ລາວ, ທ່ານຜູ້ຕາງໜ້າ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ), ອົງການສາກົນເພື່ອຄົນພິການ, ທ່ານຜູ້ຕາງໜ້າອົງການ WEL ໂຄງການ ສຶກສາເລື່ອງລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ, ທ່ານຜູ້ຕາງໜ້າ ວຽກງານພົວພັນຊຸມຊົນ ແລະ ວຽກງານ ໂຄສະນາສຶກສາ ຄວາມສ່ຽງໄພຈາກ ລບຕ ອົງການເກັບກູ້ລະ ເບີດຮາໂລເທັສ໌ (Halo-Trust), ອົງການ DCA. ໄດ້ລາຍງານຜົນສຳເລັດຂອງການເຄື່ອນໄຫວວຽກງານໃນໄຕມາດ 02, 2016 ແລະ ແຜນວຽກປະຈຳໄຕມາດ 03, 2016. ສ່ວນ ລາຍລະອຽດ ຂອງການເຄື່ອນໄຫວ ຂອງແຕ່ລະພາກສ່ວນ ພ້ອມດ້ວຍແຜນແມ່ນສາມາດເບິ່ງໄດ້ ໃນເອກະສານ ຊ້ອນທ້າຍ.

**ບ້ານສີສັງວອນ, ເມືອງໄຊເສດຖາ, ໂປສະນີ: 7261, ໂທ: (856-21) 262386, ແຟັກ : 262396,**

**ອີເມວ: uxo.nra@gmail.com, www.nra.gov.la**

- ໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຫ້ອງການ ຄຊກລ ກໍ່ໄດ້ແຈ້ງກ່ຽວກັບສະຖິຕິການເກີດອຸປະຕິເຫດຈາກ ລບຕ ບາດເຈັບ 4 ຄົນ ຕາຍ 0 ຄົນ.
- ໜ່ວຍງານຖານຂໍ້ມູນ (IM) ຫ້ອງການ ຄຊກລ ກໍ່ໄດ້ລາຍງານຈຳນວນຄັ້ງທີ່ແຕ່ລະອົງການລົງລາຍງານເຂົ້າຖານຂໍ້ມູນ IMSMA ແລະ ຮຽກຮ້ອງວ່າຖ້າອົງການໃດຍັງບໍ່ໄດ້ສົ່ງ ຫຼື ສົ່ງຍັງບໍ່ຄົບຕາມທີ່ໄດ້ຈັດຕັ້ງປະຕິບັດແມ່ນຂໍໃຫ້ຮີບຮ້ອນສົ່ງໃຫ້ພວກເຮົາແດ່.

**ໃນກອງປະຊຸມ ຍັງໄດ້ສົນທະນາ ແລະ ປຶກສາຫາລືກັນໃນຫຼາຍຫົວຂໍ້ທີ່ໜ້າສົນໃຈ:**

1. ອົງການກຸ່ມທີ່ປຶກສາດ້ານລະເບີດ MAG ໄດ້ລາຍງານເຂດພື້ນທີ່ເປົ້າໝາຍຂອງໂຄງການ 3 ເມືອງຂອງແຂວງຊຽງຂວາງ, ເຂດພື້ນທີ່ເປົ້າໝາຍຂອງໂຄງການ ທີ່ຈັດຕັ້ງປະຕິບັດໃນໄຕມາດ 2, 2016. ເມືອງໜອງແຮດ, ຜາໄຊ, ຄູນ.

- ຈັດກິດຈະກຳໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃນໂຮງຮຽນ ແລະ ຊຸມຊົນ ສ້າງອາສາສະໝັກບ້ານໃຫ້ຄວາມຮູ້ກ່ຽວກັບພົນຮ້າຍ ແລະ ວິທີປ້ອງກັນອຸປະຕິເຫດຈາກ ລບຕ ໃຫ້ປະຊາຊົນໃນບ້ານຂອງເຂົາເຈົ້າ.
- ໃນກອງປະຊຸມອົງການ MAG ໄດ້ຫວັງວ່າຕາມ MoU ທຶນ NRA ສະໜັບສະໜູນໃໝ່ຢູ່ແຂວງຊຽງຂວາງແມ່ນບໍ່ມີກິດຈະກຳການໂຄສະນາ.

2. ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ກິດຈະກຳທີ່ໄດ້ປະຕິບັດການຝຶກອົບຮົມທົບທວນຄືນຂອງ ອສບ ໂດຍການສະໜັບສະໜູນຈາກ ຄຊກລ 2 ແຂວງ ແຂວງຄຳມ່ວນ ແລະ ແຂວງອັດຕະປື.

- ສຳລັບໄຕມາດ 3, 2016 ມີແຜນ ຈັດກອງປະຊຸມ ສະຫຼຸບຖອດຖອນບົດຮຽນ ກິດຈະກຳການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ແຕ່ປີ 1996 ເຖິງປະຈຸບັນ ແລະ ການປັບປຸງກິດຈະກຳການໂຄສະນາໃໝ່ໃຫ້ແທດເໝາະກັບຍຸກປະຈຸບັນ, ຈັດຢູ່ແຂວງຄຳມ່ວນ.
- ນອກນີ້ ຄກລ ສະເໜີວ່າການໝາຍໃສ່ຫ້ອງຜູ້ໃຫ້ທຶນໃນແບບຟອມເກັບກຳຂໍ້ມູນ IMSMA ຂໍເປັນເລີ່ມປັບປຸງປີໜ້າເປັນຕົ້ນໄປປະຈຸບັນໃນໄລຍະດັດປັບທັງ 9 ແຂວງ.

3. ອົງການຮາໂລທລາສ ແຜນວຽກແມ່ນສຶກສາຄວາມສ່ຽງໃນໝູ່ບ້ານເປົ້າໝາຍ ເຮັດວຽກນຳທາງຂັ້ນບ້ານ,ຂັ້ນແຂວງ ເຮັດວຽກນຳທາງອົງການບັນເທົາທຸກກາໂຕລິກ ສຶກສາຄວາມສ່ຽງໃນບ້ານ ທາງຂັ້ນແຂວງຢາກໃຫ້ໄດ້ເປົ້າໝາຍຕາມຈຳນວນພົນ ຕາມທີ່ໄດ້ລົງປະຕິບັດວຽກຕົວຈິງທາງຂັ້ນບ້ານບໍ່ໄດ້ໃຫ້ຄວາມຮ່ວມມືໃນການເຂົ້າຮ່ວມ .
4. ອົງການ DCA ການປະຕິບັດກິດຈະກຳໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ພື້ນທີ່ເປົ້າໝາຍໂຄງການ ຢູ່ເມືອງແປກ, ເມືອງຄຳ ແຂວງຊຽງຂວາງ ແລະ ເມືອງໃໝ່, ເມືອງຂວາ ແຂວງຜົ້ງສາລີ (ຕາມ MoU).

- ບັນຫາ ແລະ ສິ່ງທ້າທາຍໃນການປະຕິບັດກິດຈະກຳຕົວຈິງ ບາງໂຮງຮຽນບໍ່ເອົາໃຈໃສ່ຕໍ່ວຽກງານການໂຄສະນາກ່ຽວກັບ ລບຕ ເທົ່າທີ່ຄວນ.
- ການເຮັດວຽກຮ່ວມກັບຄະນະສົງໃນໄຕມາດ 3 ບາງຄັ້ງກິດຈະກຳອາດບໍ່ຄວາມຕໍ່ເນື່ອງ ເພາະວ່າເປັນໄລຍະເຂົ້າພັນສາ.

5. ອົງການສາກົນເພື່ອຄົນພິການ (HI) ຢູ່ໃນກິດຈະກຳແມ່ນໂຄງສະນາ MRE ແລະ ມີການໂຄສະນາສາຍໃຫ້ເຂົາເຈົ້າເບິ່ງກິດຈະກຳ ຂອງການສອນຄູຝຶກກໍ່ຈະໄດ້ຕິດຕາມລົງໂຮງຮຽນຫຼັກສູດການຮຽນການສອນ ເຮົາເຮັດກິດຈະກຳຢູ່ເມືອງນອງ, ເຊໂປນ, ວິລະບູລີ ຈັດການຝຶກອົບຮົມໂຄສະນາສຶກສາຄວາມສ່ຽງໄພ ແລະ ການປະຖົມພະຍາບານຂັ້ນຕົ້ນໃຫ້ກັບ ອສບ.

- ສຸມໃສ່ວຽກງານຂອງການລາຍງານສາຍດ່ວນໂທຫາທີມງານແລ້ວທີມງານກໍ່ລົງໄປສຳຫຼວດທັນທີ.
- ຈັດການຝຶກອົບຮົມຄືນໃຫ້ຄູອາຈານ.

6. ອົງການເວິນເອັກດູເຄຊັນ ກິດຈະກຳແມ່ນໄດ້ດຳເນີນຕາມແຜນປົກກະຕິ ແຕ່ບໍ່ມີນິຕິກຳ (MoU) ທີ່ອະນຸມັດຈາກກະຊວງການຕ່າງປະເທດ.

7. ໜ່ວຍງານຖານຂໍ້ມູນຂ່າວສານ ການລາຍງານເຂົ້າຖານຂໍ້ມູນອົງການປະຕິບັດງານສາມາດ Link ເຂົ້າເບິ່ງຖານຂໍ້ມູນ IM ກໍາລັງ Update ຖານຂໍ້ມູນແລ້ວຈະສົ່ງ Link ໃຫ້ຍັງລໍຖ້າແຕ່ປື້ມຄູ່ມື.

**ໃນນີ້ຕອນທ້າຍຂອງກອງປະຊຸມ ທ່ານປະທານກອງປະຊຸມໄດ້ຊີ້ນໍາວ່າ:**

1. ໜ່ວຍງານຄົ້ນຄວ້າທີ່ຮັບຜິດຊອບກ່ຽວກັບ MoU ຈະອອກບົດແນະນໍາກ່ຽວກັບຂະບວນການ MoU ແລະ ແຈ້ງໃຫ້ກັບແຕ່ລະກະຊວງອົງການປະຕິບັດງານທີ່ກ່ຽວຂ້ອງໃນໄວໆນີ້.
2. ຫ້ອງການ ຄຊກລ ກໍ່ໄດ້ປະສານສົມທົບກັບຜູ້ໃຫ້ທຶນ ແລະ ໄດ້ສົ່ງບັນດາເອກະສານ ທີ່ກ່ຽວຂ້ອງກ່ຽວກັບຄວາມຕ້ອງການຂອງລັດຖະບານ ເພື່ອໃຫ້ການອະນຸມັດທຶນແທດເໝາະກັບນະໂຍບາຍ ແລະ ຄວາມຕ້ອງການຂອງທ້ອງຖິ່ນ.

ທ່ານປະທານກອງປະຊຸມ ໄດ້ກ່າວຂອບໃຈ ແກ່ແຂກທີ່ເຂົ້າຮ່ວມໃນກອງປະຊຸມໃນຄັ້ງນີ້ ແລະ ກ່າວປິດກອງປະຊຸມຢ່າງເປັນທາງການໃນເວລາ 12:00 ໂມງຂອງວັນດຽວກັນ.

❖ **ໝາຍເຫດ:** ສໍາລັບລາຍລະອຽດຂອງຜົນການເຄື່ອນໄຫວປະຕິບັດກິດຈະກໍາ ແລະ ສະຖິຕິການເຄື່ອນໄຫວເຮັດວຽກໃນໄຕມາດ 02, 2016 ແລະ ແຜນວຽກໃນໄຕມາດ 03, 2016 ຂອງບັນດາອົງການປະຕິບັດງານ, ທ່ານສາມາດເບິ່ງໄດ້ໃນເອກະສານຄັດຕິດ.

**ຫົວໜ້າຫ້ອງການ**

ຫ້ອງການ ຄຊກລ

ບຸນພະມິດ ໂສມວິຈິດ

Mr.Bounphamith SOMVICHITH

**ບັນທຶກກອງປະຊຸມໂດຍ:**

Vilayphone

ບ້ານສີສັງວອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,ໄປສະນີ 726, ໂທ: (85621) 262386, ແຟັກ : 262396,

ເບີອີເມວ : uxo.nra@gmail.com, www.nra.gov.la